ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ສຳນັກງານປົກປ້ອງເງິນຝາກ

ເລກທີ 12 /ສປງ
ນະຄອນຫຼວງວຽງຈັນ, ວັນທີ 13 ພຶດສະພາ 2024

ສຳນັກງານ ຄຄຊ
ເລກທີ 605
ວັນທີ 15 MAY 2024
ໂທລະສັບ 021 217770

## ໜັງສືແຈ້ງ

**ຮຽນ:**
- ທ່ານ ຫົວໜ້າກົມ-ທຽບເທົ່າກົມ ພາຍໃນ ທະນາຄານແຫ່ງ ສປປ ລາວ;
- ທ່ານ ຜູ້ອຳນວຍການທະນາຄານທຸລະກິດລັດ, ຫຸ້ນສ່ວນ, ເອກະຊົນ ແລະ ສາຂາທະນາຄານຕ່າງປະເທດ;
- ທ່ານ ຜູ້ອຳນວຍການ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ທີ່ເປັນສະມາຊິກ ຂອງສຳນັກງານປົກປ້ອງເງິນຝາກ;
- ທ່ານ ຜູ້ອຳນວຍການ ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ.

**ເລື່ອງ:** ແຈ້ງຕາປະທັບ ແລະ ແບບຢ່າງລາຍເຊັນປ່ຽນແທນ ຂອງຄະນະສຳນັກງານປົກປ້ອງເງິນຝາກ ທີ່ມີສິດເຊັນເອກະສານທາງດ້ານການເງິນ ແລະ ເອກະສານການຈັດຕັ້ງປະຕິບັດວຽກງານ ຂອງຄະນະສຳນັກງານປົກປ້ອງເງິນຝາກ.

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສຳນັກງານປົກປ້ອງເງິນຝາກ ສະບັບເລກທີ 68/ທຫລ, ລົງວັນທີ 22 ມັງກອນ 2019;
- ອີງຕາມ ການປັບປຸງການຈັດຕັ້ງ ພາຍໃນສຳນັກງານປົກປ້ອງເງິນຝາກ.

ສຳນັກງານປົກປ້ອງເງິນຝາກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບຕາປະທັບ ແລະ ແບບລາຍເຊັນຄະນະສຳນັກງານປົກປ້ອງເງິນຝາກ ທີ່ມີສິດເຊັນເອກະສານທາງດ້ານການເງິນ ແລະ ເອກະສານການຈັດຕັ້ງປະຕິບັດວຽກງານ ຂອງຄະນະສຳນັກງານປົກປ້ອງເງິນຝາກ ຊຶ່ງລາຍລະອຽດມີດັ່ງນີ້:

1. ແບບຢ່າງຕາປະທັບ



2. ລາຍຊື່ ແລະ ແບບຢ່າງລາຍເຊັນ ຄະນະສຳນັກງານປົກປ້ອງເງິນຝາກ.

| ລຳດັບ | ຊື່ ແລະ ນາມສະກຸນ | ຕຳແໜ່ງ | ລາຍເຊັນຄັ້ງທີ 1 | ລາຍເຊັນຄັ້ງທີ 2 |
|---|---|---|---|---|
| 1 | ທ່ານ ວົງພະຈັນ ແສງສຸວັນ<br>Mr. Vongphachanh SENGSOUVANH | ຫົວໜ້າ ສປງ | | |
| 2 | ທ່ານ ນ. ໄກສອນ ໄຊຍະພອນ<br>Mrs. Kaisone XAYAPHONE | ຮອງຫົວໜ້າ ສປງ | | |
| 3 | ທ່ານ ນ. ດາວມະນີວອນ ວິໄລວຽງ<br>Mrs. Daomanivone VILAYVIENG | ຮອງຫົວໜ້າ ສປງ<br>(ຫົວໜ້າໂຄງການ FSNP) | | |
| 4 | ທ່ານ ໂພທອງ ວົງໄຊ<br>Mr. Phothong VONGXAY | ຮອງຫົວໜ້າ ສປງ | | |

**ໝາຍເຫດ:** ຕາປະທັບນຳໃຊ້ໄດ້ ສະເພາະຄະນະສຳນັກງານປົກປ້ອງເງິນຝາກ ແລະ ແບບຢ່າງລາຍເຊັນ ເອກະສານ ຂອງຄະນະສຳນັກງານປົກປ້ອງເງິນຝາກ ສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**ຫົວໜ້າສຳນັກງານປົກປ້ອງເງິນຝາກ**

ທະນາຄານແຫ່ງ ສປປ ລາວ
ສຳນັກງານປົກປ້ອງເງິນຝາກ

ວົງພະຈັນ ແສງສຸວັນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ
ກົມບັນຊີແລະການເງິນ

ເລກທີ 0020/ກບງ
ນະຄອນຫຼວງວຽງຈັນ, ວັນທີ 14 MAY 2024

ສຳນັກງານ ຄຄຊ
ເລກທີ 604
ວັນທີ 15 MAY 2024
ໂທລະສັບ 021 217770

## ໜັງສືແຈ້ງການ

**ຮຽນ:** ບັນດາກົມ, ສາຂາ ແລະ ຫົວໜ່ວຍຖືບັນຊີທີ່ຂຶ້ນກັບ ທຫລ.

**ເລື່ອງ:** ການປະຕິບັດເຄື່ອງໝາຍຕົວເລກຈຳນວນເງິນ ແລະ ຈຳນວນເສດສ່ວນ.

- ອີງຕາມ ກົດໝາຍວ່າດ້ວຍການບັນຊີ (ສະບັບປັບປຸງ) ສະບັບເລກທີ 46/ສພຊ, ລົງວັນທີ 20 ພະຈິກ 2023;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກົມບັນຊີແລະການເງິນ ສະບັບເລກທີ 1047/ທຫລ, ລົງວັນທີ 30 ທັນວາ 2015.

ກົມບັນຊີແລະການເງິນ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ກ່ຽວກັບການປະຕິບັດເຄື່ອງໝາຍຫົວໜ່ວຍຕົວເລກ ເຊັ່ນ: ພັນ, ໝື່ນ, ແສນ, ລ້ານ, ຕື້ ຂຶ້ນໄປ ໃຫ້ນຳໃຊ້ເຄື່ອງໝາຍຈຸດ (,) ແລະ ຈຳນວນເສດສ່ວນໃຫ້ນຳໃຊ້ເຄື່ອງໝາຍ (.) ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ (ສະບັບປັບປຸງ) ສະບັບເລກທີ 46/ສພຊ, ລົງວັນທີ 20 ພະຈິກ 2023 ມາດຕາ 7 ພາສາ, ສະກຸນເງິນຕາ ແລະ ຕົວເລກຈຳນວນເງິນ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຫົວໜ້າກົມ**

ທະນາຄານແຫ່ງ ສປປ ລາວ
ກົມບັນຊີແລະການເງິນ

M. Nam...

ນະຄອນສີ ມະໂນທັມ